# ບົດສັງລວມໂດຍຫຍໍ້ຂອງທ່ານປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕໍ່ກອງປະຊຸມຫລວງຄັ້ງທີ່ VIII ຄັ້ງວັນທີ 25 ກັນຍາ 2020 ທີ່ນະຄອນຫລວງວຽງຈັນ

ຄະນະບໍລິຫານງານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ(ສຄອຊ) ຊຸດທີ VII ໄດ້ເຂົ້າມາບໍລິຫານງານແຕ່ເດືອນທັນວາ ປີ 2016 ເປັນຕົ້ນມາ ແລະ ໄດ້ເຄື່ອນໄຫວຕາມດຳລັດເລກທີ 316/ນຍ ລົງວັນທີ 20 ພະຈິກ 2009 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ສຄອຊ ເຊິ່ງມີພາລະບົດບາດເປັນອົງການຈັດຕັ້ງສູງສຸດຂອງພາກທຸລະກິດ, ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານທີ່ມີບົດບາດເປັນຂົວຕໍ່ລະຫວ່າງພາກທຸລະກິດ ແລະ ພາກລັດຖະບານ.

ໃນປີ 2017 ຄະນະບໍລິຫານງານໄດ້ສຸມໃສ່ສ້າງແຜນຍຸດທະສາດພັດທະນາພາກທຸລະກິດໃນ ສປປ ລາວ ສຳລັບຊຸມປີ 2018-2020 ຂຶ້ນເພື່ອເປັນບ່ອນອີງໃນການວາງແຜນ, ຈັດຕັ້ງ ແລະ ປະຕິບັດວຽກງານຂອງ ສຄອຊ. ເປົ້າໝາຍໄລຍະຍາວຂອງພວກເຮົາໃນໄລຍະນັ້ນແມ່ນ "ເສີມສ້າງຄວາມເຂັ້ມແຂງຂອງທຸລະກິດໃນ ສປປ ລາວ ເພື່ອພັດທະນາເສດຖະກິດແຫ່ງຊາດ ຕາມທິດພັດທະນາສີຂຽວ ແລະ ຍືນຍົງ". ຍຸດທະສາດການພັດທະນາໄດ້ມີ 4 ເສົາຄ້ຳຄື: (1) ເສີມສ້າງແວດລ້ອມທຸລະກິດໃຫ້ດີຂຶ້ນ; (2) ພັດທະນາສົ່ງເສີມທຸລະກິດຂະໜາດນ້ອຍ-ຂະໜາດກາງ SME; (3) ພັດທະນາສົ່ງເສີມຜະລິດຕະພັນລາວ (Made in Laos); ແລະ (4) ສ້າງຂໍ້ມູນທຸລະກິດ. ແລະ 6 ເປົ້າໝາຍຄື: (1) ເສີມສ້າງແວດລ້ອມການດຳເນີນທຸລະກິດໃຫ້ດີຂຶ້ນ ໂດຍນຳໃຊ້ເວທີກອງປະຊຸມທຸລະກິດລາວ ແລະ ເວທີປຶກສາຫາລືພາກລັດ ແລະ ພາກທຸລະກິດອື່ນໆ; (2) ເສີມສ້າງຄວາມເຂັ້ມແຂງຂອງທຸລະກິດລາວ ໂດຍສະເພາະຂອງທຸລະກິດຂະໜາດນ້ອຍ-ຂະໜາດກາງ SME ໂດຍພັດທະນາສູນບໍລິການ SME ພ້ອມທັງຂະຫຍາຍຖານການຜະລິດທຸລະກິດທີ່ຖືກຕ້ອງຕາມລະບຽບກົດໝາຍໃຫ້ຫຼາຍຂຶ້ນກວ່າເກົ່າ; (3) ພັດທະນາສົ່ງເສີມຜະລິດຕະພັນລາວ ຫຍີ່ຫໍ້ລາວເພື່ອການສົ່ງອອກ ແລະ ຕະຫຼາດພາຍໃນ; (4) ສ້າງຖານຂໍ້ມູນຂອງພາກທຸລະກິດ; (5) ເຊື່ອມໂຍງທຸລະກິດລາວເຂົ້າສູ່ເສດຖະກິດພາກພື້ນປະຊາຄົມອາຊຽນ ແລະ ໃນໂລກ; (6) ປັບປຸງລະບົບການຈັດຕັ້ງສົ່ງເສີມ ແລະ ການບໍລິຫານອົງກອນຂອງ ສຄອຊ, ສຄອ ແຂວງ ແລະ ສະມາຄົມທຸລະກິດ.

## 1. ຜົນສຳເລັດໃນໄລຍະຜ່ານມາ

### 1.1 ວຽກງານການປັບປຸງສະພາບແວດລ້ອມການດຳເນີນທຸລະກິດ

ສະພາບແວດລ້ອມການດຳເນີນທຸລະກິດໃນ ສປປ ລາວ ແມ່ນຢູ່ໃນອັນດັບຕ່ຳຫຼາຍ ຖ້າທຽບໃສບັນດາປະເທດໃນໂລກ. ສປປ ລາວ ແມ່ນຖືກຈັດໃນອັນດັບ 154 ຕໍ່ 190 ປະເທດ ໂດຍທະນາຄານໂລກວ່າດ້ວຍການອຳນວຍຄວາມສະດວກໃຫ້ການດຳເນີນທຸລະກິດ (ease of doing business). ເພື່ອປັບປຸງແວດລ້ອມທຸລະກິດ ສຄອຊ ໄດ້ຮ່ວມກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງແຜນການ ແລະ ການລົງທຶນ ແລະ ບັນດາອົງການຈັດຕັ້ງຂອງລັດຖະບານທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວວຽກງານ: (1) ກອງປະຊຸມທຸລະກິດລາວ (LBF); (2) ປຶກສາຫາລືສາມຝ່າຍວ່າດ້ວຍແຮງງານ; (3) ປັບປຸງນິຕິກຳ, ລະບຽບກົດໝາຍ; (4) ແກ້ໄຂຂໍ້ຂັດແຍ່ງເສດຖະກິດຂອງພາກເອກະຊົນ; ແລະ (5) ພັດທະນາການສຶກສາເຕັກນິກວິຊາຊີບແບບຄວບຄູ່ (DCT).

- **ກອງປະຊຸມທຸລະກິດລາວ (LBF):** ໄດ້ສໍາເລັດການຈັດກອງປະຊຸມ LBF ຄັ້ງທີ 10 ໃນວັນທີ 28 ມີນາ 2017, ຄັ້ງທີ 11 ໃນວັນທີ 5 ກໍລະກົດ 2018 ແລະ ຄັ້ງທີ 12 ໃນວັນທີ 12 ພະຈິກ 2019. ໃນໄລຍະ 3 ກອງປະຊຸມໄດ້ມີການສະເໜີແກ້ໄຂບັນຫາບູລິມະສິດທັງໝົດຈໍານວນ 55 ບັນຫາ, ມີຈໍານວນ 12 ບັນຫາໄດ້ຖືກແກ້ໄຂ ແລະ ຍັງມີ 43 ບັນຫາທີ່ຍັງສືບຕໍ່ແກ້ໄຂ. ໃນໄລຍະດັ່ງກ່າວຍັງໄດ້ມີການປັບປຸງກົນໄກ ແລະ ລະບົບວິທີເຮັດວຽກຂອງກອງເລຂາ LBF ໃຫ້ມີປະສິດທິຜົນຂຶ້ນຫຼາຍກວ່າເກົ່າ. ໂດຍໄດ້ມີຄໍາສັ່ງຈັດຕັ້ງປະຕິບັດມະຕິຕົກລົງຂອງກອງປະຊຸມ LBF ແຕ່ລະຄັ້ງຈາກຫ້ອງການລັດຖະບານພ້ອມມີການປະສານງານຄວາມຄືບໜ້າໃນການແກ້ໄຂບັນຫາໃນທຸກໆ 6 ເດືອນ. ໃນກອງປະຊຸມ LBF 12 ສຄອຊ ໄດ້ສະເໜີ ແລະ ລັດຖະບານໄດ້ອະນຸມັດໃຫ້ແຕ່ງຕັ້ງຕາງໜ້າພາກທຸລະກິດເຂົ້າໃນແຕ່ລະອານຸກໍາມະການ ຂອງຄໍາສັ່ງເລກທີ 02/ນຍ ວ່າດ້ວຍການອໍານວຍຄວາມສະດວກໃຫ້ການດໍາເນີນທຸລະກິດຕາມດັດສະນີທີ່ວາງໄວ້ໂດຍທະນາຄານໂລກ. ສຄອຊ ຍັງໄດ້ຈັດຕັ້ງການສໍາຫຼວດສະພາບການອໍານວຍຄວາມສະດວກໃຫ້ແກ່ການຄ້າການລົງທຶນ (PROFIT) ໃນແຕ່ລະແຂວງແລະນະຄອນຫຼວງວຽງຈັນໃນປີ 2017 ແລະ 2019. ສຄອຊ ຍັງໄດ້ຈັດກອງປະຊຸມພົບປະກັບພະນະທ່ານນາຍົກລັດຖະມົນຕີ ແລະ ຄະນະລັດຖະບານຫຼາຍຄັ້ງ ເຊິ່ງມີກອງປະຊຸມທີ່ສໍາຄັນຫຼັກໆເຊັ່ນ: ກອງປະຊຸມພົບປະ ແລະ ຮັບຟັງການໂອ້ລົມຂອງທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນວັນທີ 26 ຕຸລາ 2017; ພະນະທ່ານ ທອງລຸນສີສຸລິດ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ຢ້ຽມຢາມສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ໃນວັນທີ 27 ຕຸລາ 2017; ກອງປະຊຸມສໍາມະນາກ່ຽວກັບພາກທຸລະກິດໃນປະຈຸບັນ ແລະ ທາງອອກໃນຕໍ່ໜ້າ, ຈັດຂຶ້ນໃນວັນທີ 4 ຕຸລາ 2018, ທີ່ຫ້ອງວ່າການສູນກາງພັກ ໂດຍການໃຫ້ກຽດໂອ້ລົມຂອງ ພະນະທ່ານ ບຸນຍັງ ວໍລະຈິດ ປະທານປະເທດແຫ່ງ ສປປ ລາວ; ກອງປະຊຸມຊຸກຍູ້ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຕິດພັນກັບການພັດທະນາຊົນນະບົດ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃນວັນທີ 28 ມິຖຸນາ 2019 ທີ່ນະຄອນຫຼວງວຽງຈັນ ແລະ ກອງປະຊຸມທີ່ສໍາຄັນອື່ນໆ ເພື່ອປຶກສາຫາລືບັນຫາອັນຮີບດ່ວນ ໂດຍສະເພາະໃນໄລຍະມີວິກິດການເຊັ່ນ: ການລະບາດຂອງພະຍາດ COVID-19 ນີ້.

- **ການປຶກສາຫາລືສາມຝ່າຍວ່າດ້ວຍແຮງງານ:** ສຄອຊ ເປັນຕາງໜ້າຜູ້ໃຊ້ແຮງງານ ແລະ ໄດ້ເຮັດວຽກຢ່າງໃກ້ຊິດກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພາຍໃຕ້ກອບໄຕພາຄີຂອງອົງການແຮງງານສາກົນ. ວຽກງານທີ່ໄດ້ປະຕິບັດປະກອບດ້ວຍ:

- ການປຶກສາຫາລືຄ່າແຮງງານຂັ້ນຕໍ່າ ເພື່ອຂໍຄໍາເຫັນລັດຖະບານຈໍານວນ 5 ຄັ້ງ
- ການປະກອບຄໍາເຫັນຕໍ່ຮ່າງແຜນຍຸດທະສາດວຽກງານປົກປ້ອງສັງຄົມແຫ່ງຊາດ, ຮ່າງແຜນຍຸດທະສາດການຈ້າງງານໃນຊົນນະບົດ
- ການປະຊຸມປຶກສາຫາລືກ່ຽວກັບສົນທິສັນຍາຂອງອົງການແຮງງານສາກົນ ແລະ ອື່ນໆທີ່ກ່ຽວຂ້ອງ
- ການເຂົ້າຮ່ວມກອງປະຊຸມປະຈໍາປີຂອງອົງການແຮງງານສາກົນຂອງຄະນະປະທານ ແລະ ຄະນະເລຂາ ສຄອຊ
- ການຈັດຝຶກອົບຮົມ, ກອງປະຊຸມ ສໍາມະນາ ເພີ່ມສ້າງຄວາມເຂັ້ມແຂງໃຫ້ຜູ້ປະກອບການ-ຜູ້ໃຊ້ແຮງງານ.

ຄົນ.

- **ການປັບປຸງນິຕິກຳ ແລະ ລະບຽບກົດໝາຍ:** ໂດຍປະຕິບັດຕາມກົດໝາຍວ່າດ້ວຍການຮ່າງກົດໝາຍ . ສຄອຊ ໄດ້ເປັນຈຸດໃຈກາງໃນການໃນການລະດົມພາກທຸລະກິດໃຫ້ປະກອບຄຳເຫັນຕໍ່ຮ່າງກົດໝາຍ ແລະ ດຳລັດ/ຄຳສັ່ງ ຂອງພາກລັດຖະບານ.

- ໃນໄລຍະດັ່ງກ່າວ ສຄອຊ ໄດ້ຈັດກອງປະຊຸມຄົ້ນຄ້ວາຮ່າງນິຕິກຳຫຼາຍຄັ້ງເພື່ອສຶກສາເນື້ອໃນ ແລະ ປະກອບຄຳເຫັນຕໍ່ກົດໝາຍອາກອນມູນຄ່າເພີ່ມ, ກົດໝາຍອາກອນຊົມໃຊ້, ກົດໝາຍອາກອນລາຍໄດ້, ກົດໝາຍຄຸ້ມຄອງຊ່ວຍສາອາກອນ, ກົດໝາຍພາສີ, ກົດໝາຍປະກັນສັງຄົມ, ກົດໝາຍປະກັນສຸຂະພາບ, ກົດໝາຍວ່າດ້ວຍການທຸ້ມຕະຫຼາດ ແລະ ການອຸດໜູນ.
- ເຂົ້າຮ່ວມເປັນກຳມະທິການຄົ້ນຄວ້າປຶກສາຫາລືຜ່ານເນື້ອໃນຮ່າງກົດໝາຍການຄ້າເອເລັກໂທນິກ, ຮ່າງກົດໝາຍທະນາຄານ, ຮ່າງກົດໝາຍວ່າດ້ວຍປ່າໄມ້, ຮ່າງກົດໝາຍວ່າດ້ວຍທີ່ດິນແລະອື່ນໆ. ພ້ອມກັບການປັບປຸງດຳລັດຫຼາຍດຳລັດຂອງລັດຖະບານ.
- ຮ່ວມກັບກະຊວງອຸດສາຫະກຳແລະການຄ້າ ໄດ້ສະເໜີປັບປຸງດຳລັດວ່າດ້ວຍສະພາການຄ້າ ແລະ ອຸດສາຫາກຳແຫ່ງຊາດ ສະບັບເລກທີ 316/ນຍ ເພື່ອຍົກລະດັບພະລະບົດບາດໜ້າທີ່ຂອງ ສຄອຊ ຂຶ້ນຕື່ມ ແລະ ໄດ້ສຳເລັດເປັນດຳລັດເລກທີ 237/ນຍ ລົງວັນທີ 18 ເມສາ 2020.

## 1.2 ວຽກເສີມສ້າງຄວາມເຂັ້ມແຂງຂອງທຸລະກິດຂະໜາດນ້ອຍ-ກາງ SME

ສຄອຊ ໄດ້ເລັ່ງໃສ່ການພັດທະນາສົ່ງເສີມທຸລະກິດຂະໜາດນ້ອຍ-ຂະໜາດກາງ SME ໂດຍຜ່ານການສ້າງສູນບໍລິການ SME ເພື່ອບໍລິການໃຫ້ແກ່ຜູ້ປະກອບການຜ່ານການຝຶກອົບຮົມ, ການໃຫ້ຄຳປຶກສາດ້ານທຸລະກິດ ແລະ ການກະກຽມ SME ເຂົ້າເຖິງແຫຼ່ງທຶນ ແລະ ເຂົ້າເຖິງຕະຫຼາດ. ສຄອຊ ໄດ້ສ້າງຕັ້ງສູນບໍລິການ SME ແຫ່ງທຳອິດໃນສະຖານທີ່ຂອງ ສຄອຊ ທີ່ນະຄອນຫຼວງວຽງຈັນ ວັນທີ 17 ກຸມພາ 2017, ໄດ້ສ້າງຕັ້ງສູນບໍລິການ SME ຢູ່ແຂວງຫຼວງພະບາງໃນວັນທີ 28 ກຸມພາ 2019, ແຂວງຈຳປາສັກໃນວັນທີ 21 ສິງຫາ 2019 ແລະ ຈະສ້າງຕັ້ງສູນບໍລິການ SME ຢູ່ແຂວງສະຫວັນນະເຂດໃນເດືອນຕຸລາ 2020 ນີ້ ໂດຍການຊ່ວຍເຫຼືອຂອງອົງການ GIZ. ບັນດາສູນບໍລິການ SME ໄດ້ເຄື່ອນໄຫວວຽກງານດັ່ງຕໍ່ໄປນີ້:

- ຝຶກອົບຮົມການບໍລິຫານທຸລະກິດຕາມຫົວຂໍ້ຕ່າງໆເຊັ່ນ: ການຈັກການບັນຊີ (Book Keeping), ການບໍລິຫານແບບ 5 ສໍ (KAIZEN), ການຂຽນແຜນທຸລະກິດເພື່ອຂໍທຶນ ແລະ ອື່ນໆ.

- ການປະຊຸມສຳມະນາແລະຝຶກອົບຮົມທີ່ໄດ້ຈັດຕັ້ງປະຕິບັດມາໃນໄລຍະ 3 ປີຜ່ານມາໃນສູນບໍລິການ SME ທັງ 3 ສູນມີທັງໝົດ 5099 ຄົນເຂົ້າຮ່ວມ.

- ສຄອຊໄດ້ເຂົ້າຮ່ວມໂຄງການສ້າງຄວາມສາມາດໃຫ້SME ເຂົ້າເຖິງແຫຼ່ງທຶນທີ່ໄດ້ຮັບການຊ່ວຍເຫຼືອຂອງທະນາຄານໂລກ ແລະ ອົງການແຮງງານສາກົນ (ILO) ຈັດການຝຶກອົບຮົມໃຫ້ແກ່ SME ເພື່ອໃຫ້ຖືບັນຊີ ແລະ ຂຽນແຜນທຸລະກິດ ພ້ອມທັງພົວພັນກັບທະນາຄານທຸລະກິດເພື່ອເອົາເງິນກູ້. ໃນໄລຍະດັ່ງກ່າວມີຕາງໜ້າຈາກ SME ເຂົ້າຮ່ວມໂຄງການຈຳນວນ 1034 ຄົນ.

- ສຄອຊໄດ້ສ້າງກອງທຶນນາງຟ້າ(Angel Funds) ຂອງຕົນຂຶ້ນ ໃນໄລຍະການລະບາດ ແລະ ການຟື້ນຟູຈາກພະຍາດ COVID-19. ສຄອຊ ໄດ້ສຶກສາຄົ້ນຄ້ວາກົນໄກ ແລະ ວິທີການໃຫ້ທະນາຄານ ແລະ ສະຖາບັນການເງິນຈຸລະພາກ (MFI) ໄດ້ປ່ອຍກູ້ໃຫ້ກຸ່ມຜະລິດ, ສະຫະກອນແລະວິສາຫະກິດຂຸມຊົນໂດຍບໍ່ມີຫຼັກຊັບຄ້ຳປະກັນ. ກົນໄກດັ່ງກ່າວທີ່ເອີ້ນວ່າ ໄຂ່ດາວ ຂອງ ສຄອຊ ໄດ້ຮັບຄວາມສົນໃຈຈາກຫຼາຍທະນາຄານ ແລະ ໄດ້ມີການເຊັນສັນຍາລິເລີ່ມໂຄງການແບບສະໜອງສິນເຊື່ອຕາມລະບົບດັ່ງກ່າວ.

- ຮ່ວມກັບກະຊວງອຸດສາຫະກຳແລະການຄ້າ, ສຄອຊໄດ້ພັດທະນາຕະຫຼາດການຄ້າດີຊີຕານ(E-Commerce) ໃຫ້ SME ຊື່ວ່າ Plaosmeໃນປະຈຸບັນຖານe-commerce ດັ່ງກ່າວມີ SME ເຂົ້າຮ່ວມຈຳນວນ 596 ວິສາຫະກິດ ແລະມີ 1626 ກ່ວາຜະລິດຕະພັນທີ່ວາງໃນຖານດັ່ງກ່າວ. ຖານ Plaosme ນີ້ແມ່ນຍັງຂາດລະບົບຊຳລະສະສາງ ແລະ ລະບົບນຳສົ່ງສິນຄ້າທີ່ຈະຕ້ອງໄດ້ພັດທະນາຕື່ມ.

### 1.3 ພັດທະນາສົ່ງເສີມຜະລິດຕະພັນລາວ-ຫຍີ່ຫໍ້ລາວ ແລະ ການວາງສະແດງສິນຄ້າ.

ໂດຍຮ່ວມກັບກະຊວງອຸດສາຫະກຳ ແລະ ການຄ້າ, ສຄອຊ ໄດ້ພົວພັນຕະຫຼາດ ແລ້ວໄດ້ຈັດງານວາງສະແດງສິນຄ້າຢູ່ ສປປ ລາວ ແລະ ໄດ້ກະກຽມບໍລິສັດໄປວາງສະແດງສິນຄ້າຢູ່ຕ່າງປະເທດ. ງານວາງສະແດງທີ່ສຳຄັນປະກອບມີ:

- ງານວາງສະແດງຜະລິດຕະພັນລາວ (Made in Laos) ທີ່ໄດ້ຈັດຂຶ້ນຄັ້ງວັນທີ 28 ພະຈິກ - 4 ທັນວາ 2016 ມີຈຳນວນ 112 ບໍລິສັດເຂົ້າຮ່ວມ, ຄັ້ງວັນທີ 14-18 ມີນາ 218 ມີຈຳນວນ 115 ບໍລິສັດເຂົ້າຮ່ວມ ແລະ ຄັ້ງວັນທີ 20-28 ກໍລະກົດ 2019 ມີຈຳວນ 117 ບໍລິສັດເຂົ້າຮ່ວມ. ນອກຈາກນັ້ນຍັງໄດ້ຮ່ວມກັບສະມາຄົມທຸລະກິດຕ່າງໆຈັດງານວາງສະແດງ ຫັດຖະກຳລາວ, ເຟີນີເຈີລາວ, ອາຫານລາວ ແລະ ອື່ນໆ. ງານວາງສະແດງຢູ່ ສປປ ລາວ ທີ່ໄດ້ຈັດຕັ້ງປະກອບມີ 36 ງານ ໃນໄລຍະ 3 ປີຜ່ານມາ.

- ງານວາງສະແດງຢູ່ຕ່າງປະເທດແບບເປັນປະຈຳໃນແຕ່ລະປີທີ່ ສຄອຊ ໄດ້ກະກຽມບໍລິສັດລາວເຂົ້າຮ່ວມມີງານ CAEXPO ທີ່ເມືອງ Nanning ເຂດປົກຄອງພິເສດກວາງຊີ, ງານ China South Asia Expo ທີ່ເມືອງ Kunming ແຂວງຢຸນນານ, ງານ China-Russia Expo ທີ່ເມືອງ Harbin ແຂວງ ເຫີຍລົງຈຽງ, ງານສິນຄ້ານຳເຂົ້າ-ສົ່ງອອກ 12 ພັນນາ ເມືອງ ຊຽງຮຸ່ງ ແຂວງຢຸນນານ. ສັງລວມມີ 24 ງານ ແລະ ຈຳນວນຫຼາຍກວ່າ 80 ບໍລິສັດໄປຮ່ວມ. ນອກຈາກນັ້ນຍັງມີງານທີ່ຈັດຢູ່ປະເທດໄທ, ມາເລເຊຍ, ຫວຽດນາມ ແລະ ອື່ນໆ.

ນອກຈາກການສົ່ງເສີມຜະລິດຕະພັນລາວໂດຍຜ່ານງານວາງສະແດງແລ້ວ ສຄອຊ ໄດ້ຈັດຕັ້ງປະຕິບັດໂຄງການພັດທະນາຫຍີ່ຫໍ້ລາວ ເພື່ອສ້າງຊີວິດການເປັນຢູ່ທີ່ດີຂຶ້ນໃນຊົນນະບົດ ໂດຍການຊ່ວຍເຫຼືອຂອງອົງການ UNDP ແລະ ITC ທີ່ມີຈຸດປະສົງພັດທະນາລະບົບການສົ່ງເສີມການຜະລິດ ແລະ ຈຳໜ່າຍຕາມຕ່ອງໂສ້ການຜະລິດ ແລະ ການໃຫ້ຄວາມຮູ້ແກ່ຜູ້ປະກອບການ, ກຸ່ມຜະລິດ ແລະ ສະຫະກອນ ດ້ານການພັດທະນະຜະລິດຕະພັນ ໂດຍການສ້າງຕັ້ງຫ້ອງການສົ່ງເສີມຜະລິດຕະພັນລາວຢູ່ຫ້ອງການ ສຄອຊ ເພື່ອບໍລິການໃຫ້ຄວາມຮູ້ແກ່ຜູ້ປະກອບການຜ່ານການຝຶກອົບຮົມ ການໃຫ້ຄຳແນະນຳຜ່ານການເຮັດວຽກຕົວຈິງໂດຍຄູຝຶກໃນຫົວຂໍ້: ການເອົາຜະລິດຕະພັນໄປກຳນົດມາດຕະຖານຄຸນນະພາບແບບຍືນຍົງຂອງສິນຄ້າ (Voluntary Standard) ເຊັ່ນ: Fare trade, Organic. ການວິເຄາະຕະຫຼາດ ແລະ ຕຳແໜ່ງຜະລິດຕະພັນ (Market

Positioning) ແລະອື່ນໆ. ໃນໄລຍະດັ່ງກ່າວໄດ້ຝຶກອົບຮົມ 15 ບໍລິສັດ ສະເພາະຜະລິດຕະພັນຊາ, ກາເຟ ແລະ ເຂົ້າ. ນອກຈາກນີ້ໄດ້ສຶກສາລະບົບຕ່ອງໂສ້ການຜະລິດ ແລະ ຈັດຕັ້ງກຸ່ມຜະລິດຜູ້ສົ່ງອອກຜະລິດຕະພັນຊາ, ກາເຟ ແລະ ເຂົ້າ. ພ້ອມທັງໄດ້ເອົາຜະລິດຕະພັນຊາໄປກວດຄຸນນະພາບຢູ່ປະເທດອັງກິດ ແລະ ໄປວາງສະແດງຢູ່ງານວາງສະແດງອາຫານໂລກ SIAL ທີ່ເມືອງຊຽງໄຮ້ປະເທດຈີນມີ 6 ບໍລິສັດໄປຮ່ວມ.

ການຢັ້ງຢືນແຫຼ່ງກຳເນີດສິນຄ້າ (Certificate of Origin) ເປັນວຽກງານທີ່ສຳຄັນຂອງ ສຄອຊ ແລະ ສຄອ ແຂວງ ໃນໄລຍະ 3 ປີຜ່ານມາ. ສຄອຊ ໄດ້ຢັ້ງຢືນແຫຼ່ງກຳເນີດສິນຄ້າ ຕົບຫຍິບເຄື່ອງນຸ່ງຫົ່ມ, ເຄື່ອງຫັດຖະກຳ, ບໍ່ແຮ່, ເຄື່ອງປ່າຂອງດົງ (ຖ່ານຂາວ, ຂີ້ຄັ່ງ, ), ຜະລິດຕະພັນເຟີນີເຈີ ແລະ ອື່ນໆ ເປັນມູນຄ່າສົ່ງອອກ 1,603 ລ້ານໂດລາສະຫະລັດ ໃນປີ 2017-2018 ແລະ 2019.

### 1.4 ວຽກງານການສ້າງຖານຂໍ້ມູນວິສາຫະກິດ ແລະ ສະມາຊິກ

ໃນໄລຍະ 3 ປີຜ່ານມາ ສຄອຊ ໄດ້ປັບປຸງລະບົບການເກັບກຳຂໍ້ມູນຈາກສະມາຊິກທີ່ມີປະຫວັດລະອຽດຂອງບໍລິສັດ (Company Profile) ໃນຖານຂໍ້ມູນດີຊີຕານໃນປັດຈຸບັນມີຖານຂອງບໍລິສັດ VVIP 18 ບໍລິສັດ, VIP 16 ບໍລິສັດ ແລະ ສະມາຊິກທົ່ວໄປຫຼາຍກວ່າ 500 ບໍລິສັດ. ການກະຈາຍຂໍ້ມູນແມ່ນຜ່ານ Website ຂອງສຄອຊທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ, ຊື່ອອນລາຍ Facebook ແລະ ຜ່ານApplication ມືຖືຂອງ ສຄອຊ ທີ່ສາມາດດາວໂຫຼດໄດ້ທີ່ Play Store ແລະ App Store. ສະຫຼຸບແລ້ວວຽກງານການສ້າຖານຂໍ້ມູນໃນໄລຍະ 3 ປີຜ່ານມາແມ່ນໄດ້ສຸມໃສ່ການພັດທະນາລະບົບ Hardware ເປັນ Software ແລະ ການປ້ອນຂໍ້ມູນ ເປັນແບບຢ່າງໃນນະຄອນຫຼວງວຽງຈັນ ແຕ່ຍັງບໍ່ທັນໄດ້ຂະຫຍາຍອອກເປັນກ້ວາງຂວາງໄປແຕ່ລະແຂວງ.

### 1.5 ວຽກງານເຊື່ອມໂຍງເສດຖະກິດພາກພື້ນອາຊຽນ ແລະ ອື່ນໆ

ສຄອຊ ໄດ້ມີບົດບາດໃນການເຂົ້າຮ່ວມກິດຈະກຳຕ່າງໆ ເພື່ອການເຊື່ອມໂຍງເສດຖະກິດຂອງ ສປປ ລາວໃນພາກພື້ນ ແລະ ໃນໂລກ. ວຽກງານຕົ້ນຕໍແມ່ນການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ແລະ ການເຊື່ອມໂຍງເສດຖະກິດໃນລຸ່ມແມ່ນໍ້າຂອງ (GMS) ໃນກອບການຮ່ວມມືເສດຖະກິດຕາມສົນທິສັນຍາຕ່າງໆທີ່ລັດຖະບານໄດ້ເຊັນໄວ້, ແລະ ກອບຂອງການຮ່ວມມືເສດຖະກິດລະຫວ່າງປະເທດໃກ້ຄຽງເຊັ່ນ: ສປ ຈີນ, ປະເທດໄທ, ສສ ຫວຽດນາມ ດັ່ງລາຍລະອຽດດັ່ງຕໍ່ໄປນີ້:

- ສຄອຊ ໄດ້ເຂົ້າຮ່ວມກິດຈະກຳຂອງສະພາທີ່ປຶກສາທຸລະກິດອາຊຽນ (ASEAN-BAC) ທີ່ເຄື່ອນໄຫວໃຫ້ຄຳປຶກສາດ້ານການອຳນວຍຄວາມສະດວກໃຫ່ແກ່ການເຊື່ອມໂຍງເສດຖະກິດອາຊຽນ. ASEAN-BAC ໄດ້ສ້າງບົດວິໄຈສະພາບເສດຖະກິດຂອງອາຊຽນໃນແຕ່ລະປີເພື່ອສະເໜີໃຫ້ ຜູ້ນຳອາຊຽນພິຈາລະນາ. ກິດຈະກຳອັນສຳຄັນຂອງ ASEAN-BAC ປະກອບດ້ວຍ: (1) ການຈັດຕັ້ງກອງປະຊຸມທຸລະກິດອາຊຽນ (ASEAN-BIS) ໃນໂຄງປະກອບນີ້ ສຄອຊ ໄດ້ຈັດກອງປະຊຸມ ABIS 2016 ໃນເດືອນ 8 ປີ 2016 ຢ່າງສະຫງ່າງາມ; (2) ລາງວັນທຸລະກິດດີເດັ່ນອາຊຽນ (ABA) ໃນໂຄງປະກອບນີ້ສຄອຊໄດ້ສ້າງ ABALao ແລະໄດ້ຄັດເລືອກທຸລະກິດດີເດັ່ນລາວ ໄປແຂ່ງຕໍ່ໃນລະດັບອາຊຽນ; (3) ໂຄງການນຳລ່ອງຂອງ

ພາກທຸລະກິດອາຊຽນ (ASEAN Legacy Projects)ໃນກອບນີ້ ສຄອຊ ໄດ້ສະເໜີໂຄງການ Laos-Connect ໃນປີ 2016 ທີ່ເປັນໂຄງການຂົນສົ່ງໂລຈິສຕິກ; (4) ບົດວິໄຈສະພາບເສດຖະກິດອາຊຽນ ໃນປີ 2020 ໄດ້ມີບົດສະເໜີຊ່ອງທາງແກ້ໄຂເພື່ອຟື້ນຟູເສດຖະກິດຈາກການລະບາດຂອງພະຍາດ COVID-19.

- ວຽກງານອາຊຽນຍັງເຊື່ອມຕໍ່ກັບຫຼາຍຄະນະກຳມະການ ຫຼື ສະພາທຸລະກິດໃນພາກພື້ນອາຊີ. ສະພາທຸລະກິດທີ່ສຳຄັນແມ່ນສະພາທຸລະກິດອາຊີຕາເວັນອອກ (East Asia Business Council-EABC) ຫຼື ASEAN+3 ທີ່ລວມ ສປຈີນ, ເກົາຫຼີໃຕ້ ແລະ ຍີ່ປຸ່ນ. ວຽກຕົ້ນຕໍຂອງ EABC ໃນປະຈຸບັນແມ່ນ ຂະຫຍາຍການເຊື່ອມໂຍງລະດັບພາກພື້ນອາຊີ-ປາຊີຟິກ ແລະ ໄດ້ສຸມໃສ່ປະກອບຄຳເຫັນຕໍ່ຮ່າງສັນຍາຮ່ວມມືສ້າງເຂດການຄ້າເສລີ (Regional Comprehensive Economic Partnership-RCEP) ທີ່ຈະລວມ ASEAN+8 ລວມປະເທດອົດສະຕາລີ, ນິວຊີແລນ.

- ວຽກງານການເຊື່ອມໂຍງເສດຖະກິດໃນລຸ່ມແມ່ນ້ຳຂອງ GMS ເປັນວຽກງານທີ່ສຳຄັນ ໂດຍ(GMS-BC) ທີ່ປະທານ ສຄອຊ ໄດ້ເປັນເລຂາທິການໃຫຍ່ ແລະ ເປັນປະທານແຕ່ປີ 2018 ເປັນຕົ້ນມາ. ວຽກງານຂອງ GMS-BC ປະກອບດ້ວຍ: ການປະກອບຄຳເຫັນຂອງພາກທຸລະກິດຕໍ່ສັນຍາການຂົນສົ່ງຂ້າມແດນ (CBTA) ການເຄື່ອນໄຫວຂອງສະມາຄົມຂົນສົ່ງຜ່ານແດນຂອງ GMS (GMS-FRETA), ການອຳນວຍຄວາມສະດວກທາງດ້ານການຄ້າໃນເຂດລ່ອງເສດຖະກິດເໜືອໃຕ້ ແລະ ອື່ນໆ. ນອກຈາກ GMS-BC ແລ້ວ ຍັງມີການຮ່ວມມືໃນກອບຂອງ ACMECS ທີ່ສະໜັບສະໜູນຈາກປະເທດໄທ.

- ແຕ່ປີ 2019 ເປັນຕົ້ນມາ ສຄອຊ ໄດ້ເອົາໃຈໃສ່ຮ່ວມມືເສດຖະກິດ 2 ຝ່າຍ ໂດຍສະເພາະກັບ ສປ ຈີນ ສຄອຊ ໄດ້ເຊັນບົດບັນທຶກກັບອົງການສົ່ງເສີມການສົ່ງອອກຂອງ ສປ ຈີນ (CCPIT) ຫຼາຍສະບັບເພື່ອຮ່ວມມືໃນການພັດທະນາແລະໄກ່ເກ່ຍບັນຫາດ້ານເສດຖະກິດເພື່ອພັດທະນາການລົງທຶນໃນເຂດເສັ້ນທາງລົດໄຟລາວ-ຈີນ. ສຄອຊ ຍັງໄດ້ສ້າງຕັ້ງຄະນະກຳມະທິການຮ່ວມມືທຸລະກິດລາວ-ຈີນຂຶ້ນ ທີ່ປະກອບມີບໍລິສັດຂະໜາດໃຫຍ່ຂອງສອງປະເທດເພື່ອສ້າງໂຄງການພັດທະນາ.

- ນອກຈາກການຮ່ວມມືເສດຖະກິດທີ່ກ່າວມານີ້ ສຄອຊ ຍັງໄດ້ຮ່ວມເວທີທຸລະກິດລະດັບພາກພື້ນ ແລະ ລະດັບໂລກຫຼາຍອັນເຊັ່ນ: Asia-Pacific Business Forum-APBF, Asia-Pacific Trade Agreement CCI, ແລະອື່ນໆ.

### 1.6 ການປັບປຸງການຈັດຕັ້ງຂອງ ສຄອຊ ແລະ ສຄອ ແຂວງ-ນະຄອນຫຼວງ

ໃນໄລຍະ 3 ປີຜ່ານມາ ສຄອຊ ໄດ້ປັບປຸງການຈັດຕັ້ງ ແລະ ລະບົບວິທີເຮັດວຽກຂອງຄະນະປະຈຳ, ຄະນະບໍລິຫານງານ, ຄະນະທີ່ປຶກສາ ແລະ ພະນັກງານ. ພ້ອມທັງໄດ້ລົງທຶນສ້ອມແປງປັບປຸງ ແລະ ຂະຫຍາຍຫ້ອງການ, ສະຖານທີ່, ສ້າງຫ້ອງປະຊຸມໃຫຍ່, ຮ້ານອາຫານ, ຫ້ອງປະຊຸມນ້ອຍຫຼາຍໆຫ້ອງເພື່ອບໍລິການໃຫ້ແກ່ສະມາຊິກ.

- ສຄອຊ ໄດ້ແບ່ງສາຍບໍລິຫານທີ່ປະກອບດ້ວຍ ປະທານກິດຕິມະສັກ, ປະທານ 1 ທ່ານ, ຮອງປະທານ 6 ທ່ານ, ຄະນະບໍລິຫານງານ 45 ທ່ານ ລວມມີ ສຄອ ແຂວງ, ຄະນະທີ່ປຶກສາ 33 ທ່ານ, ປະທານກວດກາ 1 ທ່ານ, ນາຍຄັງ 1 ທ່ານ, ເລຂາທິການ 1 ທ່ານ ແລະ ຮປງເລຂາທິການ 4 ທ່ານ. ລວມມີ 4 ພະແນກ, 1 ຫ້ອງການ ແລະ 2 ສູນ ປະກອບມີພະນັກງານທັງໝົດ 42 ຄົນ ຍິງ 24 ຄົນ. ນອກຈາກນັ້ນຍັງມີອົງການຈັດຕັ້ງໜ່ວຍພັກ ມີສະມາຊິກ 24 ສະຫາຍ.

- ສຄອຊ ໄດ້ລົງຢ້ຽມຢາມສະພາການຄ້າແຂວງ ແລະ ນະຄອນຫຼວງເພື່ອປັບປຸງການຈັດຕັ້ງຂອງເຂົາເຈົ້າ ແລະ ສະເໜີປັບປຸງດຳລັດເລກທີ 316/ນຍ ວ່າດ້ວຍ ສຄອຊ ໃຫ້ ສຄອ ແຂວງ-ນະຄອນຫຼວງ ມີສາຍຕັ້ງເປັນ ສຄອຊ. ດຳລັດໃໝ່ເລກທີ 237/ນຍໄດ້ກຳນົດແຈ້ງບົດບາດໜ້າທີ່ຂອງ ສຄອ ແຂວງ-ນະຄອນຫຼວງ. ໃນໄລຍະດັ່ງກ່າວ ສຄອ ແຂວງໄຊສົມບູນແມ່ນໄດ້ຖືກສ້າງຕັ້ງຂຶ້ນ ເຮັດໃຫ້ເຄືອຄ່າຍຂອງ ສຄອຊ ມີຢູ່ທຸກໆແຂວງ.

## 2. ຂໍ້ສະດວກ, ຂໍ້ຫຍຸ້ງຍາກແລະບົດຮຽນທີ່ຖອດຖອນໄດ້

ຜ່ານມາການຈັດຕັ້ງວຽກງານຕົວຈິງໃນໄລຍະຜ່ານມາສາມາດສະຫຼຸບຕີລາຄາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ດັ່ງຕໍ່ໄປນີ້:

### 2.1 ຂໍ້ສະດວກ

- ຄະນະປະຈຳ ແລະ ຄະນະບໍລິຫານງານ ໄດ້ມີຄວາມສາມັກຄີ ແລະ ມີຄວາມເສຍສະຫຼະສູງຕໍ່ການຈັດຕັ້ງປະຕິບັດທຸກໆວຽກງານຂອງ ສຄອຊ.

- ສຄອຊ ໄດ້ສ້າງແຜນຍຸດທະສາດ, ແຜນປະຕິບັດງານສຳລັບປີ 2018-2020 ທີ່ລະອຽດສົມຄວນ ແລະ ໄດ້ມອບໝາຍໜ້າທີ່ຮັບຜິດຊອບໃຫ້ຄະນະຜູ້ປະຈຳການ ແລະ ຄະນະບໍລິຫານງານຢ່າງຊັດເຈນ ໂດຍທຸກຄົນຮັບຜິດຊອບເຮັດໃຫ້ວຽກງານຂອງ ສຄອຊ ມີປະສິດທິຜົນຂຶ້ນຫຼາຍກວ່າເກົ່າ.

- ພາກລັດໂດຍສະເພາະທ່ານນາຍົກລັດຖະມົນຕີ, ພ້ອມທັງຄະນະນຳຂອງລັດຖະບານ ໄດ້ໃຫ້ຄວາມສຳຄັນຂອງ ສຄອຊ ແລະ ໄດ້ຍົກບົດບາດຂອງ ສຄອຊ ຂຶ້ນເຫັນໄດ້ໃນການອອກດຳລັດໃໝ່ ເລກທີ 237/ນຍ ທີ່ເປັນບ່ອນອີງທາງດ້ານນິຕິກຳໃຫ້ ສຄອຊ ຖືກຮັບຮູ້ຈາກທຸກໆ ຂະແໜງການ.

- ການປະສານສົມທົບລະຫວ່າງ ສຄອຊ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງເສດຖະກິດອື່ນໆ ແມ່ນແໜ້ນແຟ້ນຫຼາຍ ເຮັດໃຫ້ວຽກງານທີ່ຖືກມອບໝາຍໃຫ້ດຳເນີນແລ່ນສະດວກ.

- ສຄອ ແຂວງ-ນະຄອນຫຼວງ, ສະມາຄົມ-ກຸ່ມທຸລະກິດ, ສຄອ ຕ່າງປະເທດຢູ່ ສປປ ລາວ ພ້ອມທັງພະນັກງານລ້ວນແຕ່ສະໜັບສະໜູນການເຮັດວຽກ ແລະ ເຂົ້າຮ່ວມຂະບວນວຽກງານຂອງ ສຄອຊ ຢ່າງຕັ້ງໜ້າ.

- ສຄອຊ ໄດ້ມີກິດຈຳກຳສ້າງລາຍຮັບພຽງພໍເພື່ອເຄື່ອນໄຫວວຽກງານທີ່ໄດ້ຖືກມອບໝາຍຢ່າງມີປະສິດທິຜົນ.

### 2.2 ຂໍ້ຫຍຸ້ງຍາກ

- ກໍເຖິງແມ່ນວ່າ ສຄອຊ ໄດ້ມີບົດບາດເພີ່ມຂຶ້ນ ແລະ ໄດ້ມີການບໍລິການໃຫ້ພາກທຸລະກິດເພີ້ມຂຶ້ນ ສຄອຊ ແລະ ສຄອ ແຂວງ-ນະຄອນຫຼວງ ຍັງມີຄວາມຫຍຸ້ງຍາກໃນການຂະຫຍາຍສະມາຊິກ. ມາເຖິງປະຈຸບັນສະມາຊິກມີພຽງແຕ່ 2% ຂອງຈຳນວນວິສາຫະກິດທີ່ຈົດທະບຽນທັງໝົດໃນ ສປປ ລາວ.

- ສຄອຊ ຍັງບໍ່ທັນສາມາດຈັດຕັ້ງລະບົບການບໍລິການໃຫ້ພາກທຸລະກິດໂດຍກົງ ຈຶ່ງເຮັດໃຫ້ຫຼາຍຫົວໜ່ວຍທຸລະກິດບໍ່ມີຄວາມສົນໃຈເຂົ້າຮ່ວມກິດຈະການ ແລະ ເປັນສະມາຊິກ.

- ອົງການຈັດຕັ້ງພາກລັດຖະບານຈຳນວນໜຶ່ງ ໂດຍສະເພາະໃນຂັ້ນທ້ອງຖິ່ນຍັງບໍ່ໄດ້ໃຫ້ການສະໜັບສະໜູນ ສຄອ ໃນແຕ່ລະຂັ້ນຢ່າງພຽງພໍ.

- ພະນັກງານຂອງ ສຄອຊ ຍັງມີຂອດຈຳກັດໃນການບໍລິການຕາມທິດທາງໃໝ່ທີ່ໄດ້ລະບຸໄວ້ໃນແຜນຍຸດທະສາດ.

- ສະພາບແວດລ້ອມທາງດ້ານທຸລະກິດທີ່ມີຢູ່ເຮັດໃຫ້ວິສາຫະກິດແມ່ນເຄື່ອນໄຫວນອກລະບົບ ຫຼື ເຄິ່ງລະບົບ ແລະ ບໍ່ສົນໃຈຕໍ່ກິດຈະການຂອງ ສຄອຊ.

- ລາຍຮັບຂອງ ສຄອຊ ເຖິງແມ່ນວ່າຫາມາໄດ້ໃນລະດັບພຽງພໍ ແຕ່ຍັງບໍ່ທັນເປັນລາຍຮັບທີ່ໝັ້ນຄົງທີ່ມາຈາກການບໍລິການ.

## 2.3 ບົດຮຽນທີ່ຖອດຖອນໄດ້

- ຄວາມເຊື່ອໝັ້ນ ແລະ ການສະໜັບສະໜູນຂອງລັດຖະບານເປັນຂໍ້ກຸນແຈໃນການເຄື່ອນໄຫວວຽກງານຂອງ ສຄອຊ ແລະ ສຄອ ແຂວງນະຄອນຫຼວງ.

- ການເພີ່ມທະວີການປະສານສົມທົບວຽກງານລະຫວ່າງບັນດາອົງການຈັດຕັ້ງຂອງລັດຖະບານ ແລະ ຂອງ ສຄອຊ ໂດຍສະເພາະລະຫວ່າງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສຄອຊ, ລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ສຄອ ແຂວງ, ນະຄອນຫຼວງແມ່ນມີຄວາມຈຳເປັນເພື່ອໃຫ້ການເຄື່ອນໄຫວວຽກງານມີປະສິດທິຜົນ.

- ໃນສະພາບແວດລ້ອມທຸລະກິດທີ່ຍັງບໍ່ເອື້ອອຳນວຍ ມີຄວາມຈຳເປັນບັງຂັບໃຫ້ບໍລິສັດໃຫຍ່ໆເຂົ້າຮ່ວມກິດຈະການ ແລະ ເປັນສະມາຊິກຂອງ ສຄອຊ ເພື່ອເປັນກຳລັງແຮງ ແລະ ແຫຼ່ງຄວາມຮູ້ດ້ານທຸລະກິດຂອງ ສປປ ລາວ.

# 3. ແຜນຍຸດທະສາດການພັດທະນາພາກທຸລະກິດປີ 2021-2025.

ເພື່ອເປັນທິດໃນການພັດທະນາພາກທຸລະກິດໃນສປປລາວ, ສຄອຊໄດ້ສ້າງແຜນຍຸດທະສາດສຳລັບຊຸມປີ 2021-2025 ຂຶ້ນໂດຍອີງໃສ່ ກ).ບັນດາວຽກງານແລະບົດຮຽນທີ່ໄດ້ປະຕິບັດແລະຖອດຖອນໄດ້ໃນໄລຍະຜ່ານມາ, ຂ). ສະພາບເສດຖະກິດມະຫາພາກຂອງສປປລາວໃນປັດຈຸບັນ, ຄ). ທິດຊີ້ນຳແຜນພັດທະນາເສດຖະກິດສັງຄົມຄັ້ງທີ່ 9, 2021-2025 ຂອງລັດຖະບານແລະ ງ).ສະພາບການຜົນກະທົບແລະການຟື້ນຟູເສດຖະກິດຈາກການລະບາດຂອງພະຍາດCOVID-19.

ຍຸດທະສາດການພັດທະນາພາກທຸລະກິດສຳລັບປີ 2021-2025 ແມ່ນຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫມ່ຂອງສຄອຊທີ່ໄດ້ຖືກມອບໝາຍຈາກລັດຖະບານໂດຍດຳລັດເລກທີ່ 237/ນຍລົງວັນທີ18 ພຶດສະພາ 2020 ໃຫ້ປະກົດຜົນເປັນຈິງ.

ມູມມອງໃນອານາຄົດ(Vision) ຂອງສຄອຊແມ່ນ **“ໃຫ້ ສປປລາວມີສະພາບແວດລ້ອມໃນການດຳເນີນທຸລະກິດທີ່ເອື້ອອຳນວຍແລະທີ່ມີທັດຊະນະແຂ່ງຂັນທີ່ດີ ພ້ອມທັງມີພາກທຸລະກິດທີ່ເຂັ້ມແຂງທີ່ປະກອບສ່ວນຢ່າງຫຼວງຫຼາຍຕໍ່ການຂະຫຍາຍຕົວຂອງເສດຖະກິດຂອງປະເທດແບບຍືນຍົງ”.**

ພາລະກິດ(Mission) ຂອງສຄອຊແມ່ນ: **"ເສີມສ້າງຄວາມເຂັ້ມແຂງຂອງພາກທຸລະກິດໂດຍການພົບປະກັບລັດຖະບານ,ການບໍລິການໃຫ້ MSME/SME, ການພັດທະນາຜະລິດຕະພັນຜະລິດຕະພັນລາວແລະໂດຍການຊ່ວຍເຫຼືອທຸລະກິດລາວໃນການເຊື່ອມໂຍງກັບເສດຖະກິດພາກພື້ນໂດຍການລົງທຶນແບບຍືນຍົງ".**

ຜ່ານການວິເຄາະແວດລ້ອມແລະສະພາບເສດຖະກິດທີ່ກ່າວມາຂ້າງເທິງນີ້, ສຄອຊໄດ້ ກຳນົດແຜນຍຸດທະສາດທີ່ມີ 6 ເສົາຄ້ຳທີ່ເປັນບູລິມະສິດແລະມີວຽກງານທີ່ກ່ຽວພັນກັບຫຼາຍຂະແໜງການເພື່ອຮັບປະກັນລາຍຮັບດ້ານການເງິນໃຫ້ຍືນຍົງແລະເສີມສ້າງຄວາມສາມາດຂອງສະພາການຄ້າ ແລະອຸດສາຫະກຳແຂວງແລະສາມະຄົມທຸລະກິດຕ່າງໆ.

ແຜນຍຸດທະສາດການພັດທະນາພາກທຸລະກິດປີ 2021-2025ລວມມີ 6ເສົາຄ້ຳ ປະກອບດ້ວຍ **<u>ເສົາຄ້ຳທີ1:</u>** ການພົບປະລະຫວ່າງລັດ-ທຸລະກິດເພື່ອປັບປຸງແວດລ້ອມການດຳເນີນທຸລະກິດ - ການຈັດຕັ້ງປະຕິບັດກອງປະຊຸມລາວ(Lao Business Forum-LBF). **<u>ເສົາຄ້ຳທີ່2</u>**: ການພັດທະນາສົ່ງເສີມທຸລະກິດຂະໜາດນ້ອຍແລະຂະໜາດກາງ(SME) ໂດຍຜ່ານສູນບໍລິການSME(SSC). **<u>ເສົາຄ້ຳທີ່3:</u>** ການສົ່ງເສີມຕະຫຼາດຜະລິດຕະພັນລາວ. **<u>ເສົາຄ້ຳທີ່4:</u>** ການເຊື່ອມໂຍງເສດຖະກິດພາກພື້ນ ແລະການສົ່ງເສີມການລົງທຶນທີ່ຍືນຍົງ. **<u>ເສົາຄ້ຳທີ່5:</u>** ການພັດທະນາຜູ້ປະກອບການແລະກິດຈະກຳຜູ້ໃຊ້ແຮງງານ. **<u>ເສົາຄ້ຳທີ່ 6:</u>**ຂໍ້ມູນຂ່າວສານ,ການພົວພັນມອບຊິບແລະການບໍລິການໃຫ້ແກ່ສະມາຊິກ.

## 4. ແຜນລະອຽດເພື່ອປະຕິບັດຍຸດທະສາດພັດທະນາພາກທຸລະກິດໃນສປປລາວ2021-2023(3ປີ).

### 4.1 ການພັດທະນາການພົບປະລະຫວ່າງພາກລະລັດ-ພາກທຸລະກິດເພື່ອແວດລ້ອມທຸລະກິດທີ່ດີຂຶ້ນ.

ສະພາບແວດລ້ອມໃນການດຳເນີນທຸລະກິດໃນສປປລາວແມ່ນບໍ່ເອື້ອອຳນວຍຢ່າງທີ່ຄວນ. ຍັງມີຫຼາຍຂັ້ນຕອນ, ລະບຽບການໃນຫຼາຍລະດັບ. ທະນາຄານໂລກໄດ້ຈັດອັນດັບໃນການອຳນວຍຄວາມສະດວກໃຫ້ທຸລະກິດໃນສປປລາວເປັນທີ່ 154 ທຽບໃສ່ 190 ປະເທດ. ນອກຈາກນີ້ຍັງມີຫຼາຍດັດສະນີຫຼາຍດ້ານເສດຖະກິດທີ່ ສປປລາວແມ່ນຢູ່ໃນອັນດັບຕ່ຳສຸດແລະມີຄວາມຕ້ອງການໃຫ້ລັດຖະບານໄດ້ເອົາໃຈໃສ່ແກ້ໄຂແລະປັບປຸງ.

ສຄອຊໄດ້ຖືກມອບໝາຍໃຫ້ເປັນກອງເລຂາຂອງເວທີທຸລະກິດລາວ(LBF) ຮ່ວມກັບກະຊວງອຸດສາຫະກຳແລະການຄ້າແຕ່ປີ 2016 ເປັນຕົ້ນມາແລະໄດ້ດຳເນີນການພົບປະລະຫວ່າງພາກລັດແລະພາກທຸລະກິດ ຢ່າງເປັນລະບົບແລະໄດ້ແກ້ໄຂຫຼາຍບັນຫາທີ່ສະກັດກັ້ນການດຳເນີນທຸລະກິດຢູ່ ສປປລາວ. ຢ່າງໃດກໍ່ຕາມບັນຫາທີ່ຍັງຄົງຄ້າງແມ່ນຍັງມີຫຼາຍແລະອັນດັບໃນການອຳນວຍຄວາມສະດວກໃຫ້ທຸລະກິດແມ່ນຍັງຕ່ຳຫຼາຍສຳນັກງານນາຍົກລັດຖະມົນຕີກໍ່ໄດ້ອອກຄຳສັ່ງເລກທີ່ 02/ນຍລົງວັນທີ່ 1 ກຸມພາ 2018 ເພື່ອໃຫ້ອົງການຈັດຕັ້ງຂອງລັດຖະບານທີ່ກ່ຽວຂ້ອງໄດ້ເອົາໃຈໃສ່ແກ້ໄຂສິ່ງຂີດຂວາງຕ່າງໆໃນການດຳເນີນທຸລະກິດ. ມາເຖິງປັດຈຸບັນສຄອຊໄດ້ປະສານກັບກະຊວງແຜນການແລະການລົງທຶນເພື່ອມີສ່ວນຮ່ວມໃນການຈັດຕັ້ງປະຕິບັດຄຳສັ່ງເລກທີ່ 02/ນຍ ຮ່ວມກັບຝ່າຍລັດ, ກິດຈະກຳຂອງເວທີທຸລະກິດລາວແລະການຈັດຕັ້ງປະຕິບັດຄຳສັ່ງເລກທີ່ 02/ນຍຈະເປັນກິດຈະກຳຫຼັກຂອງເສົາຄ້ຳທີ1.ນອກຈາກນັ້ນ, ເສົາຄ້ຳທີ1 ຂອງສຄອຊຍັງມີການປັບປຸງລະບຽບກົດໝາຍໃຫ້ແທດເໝາະໂດຍການປະກອບຄຳເຫັນຕໍ່ຮ່າງກົດໝາຍແລະນິຕິກຳຕ່າງໆທີ່ຮ່າງຈາກຝ່າຍລັດຖະບານ, ການເອື້ອອຳນວຍໃຫ້ແກ່ແວດລ້ອມທຸລະ

ກິດຍັງມີວຽກງານການໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງທຸລະກິດທີ່ເໝາະສົມແລະຖືກຕ້ອງກິດຈະການດັ່ງກ່າວແມ່ນຈະຢູ່ໃນເສົາຄໍ້າທີ່ 1ນີ້.ເພື່ອບັນລຸຈຸດປະສົງແລະເປົ້າໝາຍການພັດທະນາການພົບປະລະຫວ່າງພາກລະລັດ-ພາກທຸລະກິດເພື່ອແວດລ້ອມທຸລະກິດທີ່ດີຂຶ້ນ ເຊິ່ງລວມມີ3 ຈຸດປະສົງດັ່ງລຸ່ມນີ້:

- ເພື່ອຮັບປະກັນໃຫ້ມີລະບົບແລະກົນໄກການພົບປະລະຫວ່າງພາກລັດແລະພາກທຸລະກິດທີ່ມີປະສິດທິຜົນໃນລະດັບສູນກາງແລະທ້ອງຖິ່ນໂດຍມີສ່ວນຮ່ວມຂອງທຸກໆພາກສ່ວນແລະກຸ່ມເປົ້າໝາຍທີ່ກ່ຽວຂ້ອງ.
- ເພື່ອຮັບປະກັນໃຫ້ ສຄອຊ, ສຄອແຂວງແລະສະມາຄົມທຸລະກິດມີຄວາມສາມາດແລະມີກົນໄກໃນການປະກອບຄໍາເຫັນຕໍ່ຮ່າງນິຕິກໍາຕ່າງໆພ້ອມທັງໃຫ້ຄໍາແນະນໍາຕໍ່ມະຫາພາກ.
- ເພື່ອຮັບປະກັນໃຫ້ມີລະບົບແລະກົນໄກການແກ້ໄຂຂໍ້ຂັດແຍ້ງຂອງທຸລະກິດຢູ່ ສຄອຊທີ່ມີປະສິດທິຜົນ.

### 4.2 ການພັດທະນາສົ່ງເສີມທຸລະກິດຂະໜາດນ້ອຍແລະຂະໜາດກາງ(SME) ແລະສູນບໍລິການ(SSC).

ທຸລະກິດຂະໜາດນ້ອຍແລະກາງ(SME) ແມ່ນກວມເອົາ99% ຂອງຈໍານວນທຸລະກິດທີ່ຈົດທະບຽນແລະໄດ້ກວມເອົາ 82% ຂອງຈໍານວນແຮງງານຢູ່ ສປປລາວ. SME ຈຶ່ງມີຄວາມສໍາຄັນຫຼາຍຕໍ່ຊີວິດການເປັນຢູ່ຂອງປະຊາຊົນລາວ, ເຖິງຢ່າງໃດກໍ່ຕາມSME ຢູ່ ສປປລາວແມ່ນປະກອບພຽງແຕ່ 20% ຂອງGDP ເປັນອັດຕາຕໍ່າສຸດຢູ່ໃນພາກພື້ນ.SME ແມ່ນມີບັນຫາແລະຂໍ້ຫຍຸ້ງຍາກໃນການດໍາເນີນທຸລະກິດຢ່າງເປັນທາງການເຂົາເຈົ້າເຄື່ອນໄຫວນອກລະບົບຫຼືເຄິ່ງໃນລະບົບໂດຍບໍ່ມີການຈົດລະບຽນຖືກຕ້ອງ, ບໍ່ມີການບັນຊີ ແລະມີຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງທຶນ, ຕະຫຼາດແລະວັນນະກໍາໃໝ່ ໂດຍສະເພາະໃນຍຸກສະໃໝອຸດສາຫະກໍາ4.0.ໃນປັດຈະບັນການສົ່ງເສີມSME ຈາກອົງກອນຕ່າງໆແມ່ນມີຈໍາກັດຫຼືເກືອບບໍ່ມີເລີຍ, ລະບົບການສົ່ງເສີມທີ່ມີຢູ່ແມ່ນເນັ້ນໃສ່ການຫຼຸດພົ້ນຈາກຄວາມທຸກຍາກດ້ວຍການຄຸ້ມຄອງດ້ານສະບຽງອາຫານແຕ່ຍັງບໍ່ໄດ້ສົ່ງເສີມການຜະລິດຊຸມຊົນໃຫ້ໄປຕາມກົນໄກຕະຫຼາດຢ່າງແທ້ຈິງ.

ຍຸດທະສາດການພັດທະນາSME2016-2020 ຂອງລັດຖະບານໄດ້ວາງກອບໃນການພັດທະນາແລະໄດ້ມອບໝາຍໜ້າທີ່ໃຫ້ ສຄອຊແລະສະມາຄົມທຸລະກິດໃນການຊຸກຍູ້ຊ່ວຍເຫຼືອແລະສົ່ງເສີມSME ຢູ່ ສປປລາວ. ເພື່ອຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວສຄອຊໄດ້ກໍານົດເສົາຄໍ້າທີ 2 ໃນການພັດທະນາປັບປຸງແລະຊຸກຍູ້ຊ່ວຍເຫຼືອSME ໂດຍຜ່ານສູນບໍລິການ SME(SSC) ທີ່ຈະສະໜອງການຝຶກອົບຮົມສະເພາະ, ການຊ່ວຍເຫຼືອໃຫ້ເຂົ້າເຖິງແຫຼ່ງທຶນແລະການປະກອບຂໍ້ມູນຂ່າວສານໃຫ້ເຂົາເຈົ້າສາມາດປັບປຸງທຸລະກິດຂອງເຂົາເຈົ້າ.

ສຄອຊມີແຜນຈະປັບປຸງສູນSME ທີ່ມີຢູ່ ນະຄອນຫຼວງວຽງຈັນ, ຫຼວງພະບາງແລະຈໍາປາສັກແລະຈະສ້າງສູນSSC ໃໝ່ໃນບັນດາແຂວງທີ່ມີເງື່ອນໄຂເພື່ອສາມາດບັນລຸວຽກງານນີ້ ສຄອຊໄດ້ວາງຈຸດປະສົງເປົ້າໝາຍດັ່ງລຸ່ມນີ້:

- ພັດທະນາຄວາມສາມາດແລະສະຖານທີ່ຂອງສູນSSC, ຊ່ວຍເຫຼືອການລິເລີ່ມສ້າງວິສາຫະກິດ(Start-up), ນາວັດຕະກໍາໃຫມ່ ແລະຂະຫຍາຍໂຄງສ້າງການຊ່ວຍເຫຼືອໃຫ້ແກ່ SME.
- ສູນSSC ໄດ້ສະໜອງການຝຶກອົບຮົມທີ່ຈໍາເປັນຢ່າງເປັນປະຈໍາ.

- ສຄອຊໄດ້ມີລະບົບແລະກົນໄກຊ່ວຍເຫຼືອSME ໃຫ້ເຂົ້າເຖິງແຫຼ່ງທຶນ.
- ສູນSSC ໄດ້ມີແຫຼ່ງຂໍ້ມູນຂ່າວສານທີ່ຖືກນຳໃຊ້ ແລະເປັນທີ່ນິຍົມຈາກSME.

### 4.3 ການສົ່ງເສີມແລະການຕະຫຼາດຂອງຜະລິດຕະພັນລາວ.

ຜະລິດຕະພັນລາວໂດຍສະເພາະກຸ່ມທີ່ນຳໃຊ້ວັດຖຸດິບກະສິກຳປ່າໄມ້ແມ່ນມີຄວາມຫຍຸ້ງຍາກໃນການເຂົ້າຫາຕະຫຼາດພາຍໃນແລະ ຕ່າງປະເທດ. ເປົ້າໝາຍຂອງເສົາຄ້ຳທີ 3 ແມ່ນການປັບປຸງລະບົບການສົ່ງເສີມການຕະຫຼາດຂອງຜະລິດຕະພັນລາວຕາມລະບົບສົ່ງເສີມຕ່ອງໂສ້ການຜະລິດແລະການຈຳໜ່າຍຄົບວົງຈອນ.

ສຄອຊມີສູນບໍລິການສົ່ງເສີມຕະຫຼາດຜະລິດຕະພັນລາວເພື່ອຊຸກຍູ້ຊ່ວຍເຫຼືອໃຫ້ຜະລິດຕະພັນທີ່ເປັນແຫຼມແລະມີເງື່ອນໄຂພັດທະນາເຂົ້າສູ່ຕະຫຼາດທັງພາຍໃນແລະ ຕ່າງປະເທດ. ສູນບໍລິການສົ່ງເສີມຕະຫຼາດຈະໄດ້ຄັດເລືອກເອົາກຸ່ມຜະລິດຕະພັນທີ່ເປັນແຊມປຽນ, ທຳການວິເຄາະສະພາບການຜະລິດແລະຈໍລະຈອນຈຳໜ່າຍຕາມຕ່ອງໂສ້ການຜະລິດຂອງແຕ່ລະຜະລິດຕະພັນ, ເຝິກອົບຮົມຜູ້ຜະລິດແລະຜູ້ຈຳໜ່າຍ, ຢັ້ງຢືນຄຸນະພາບແຫຼ່ງກຳເນີດສິນຄ້າ ແລະອື່ນໆຕາມຄວາມຕ້ອງການຂອງຕະຫຼາດແລ້ວສ້າງຍີ່ຫໍ້ຜະລິດຕະພັນລາວພ້ອມທັງຊ່ວຍເຫຼືອໃນການສົ່ງອອກຜະລິດຕະພັນດັ່ງກ່າວໃນຕ່າງປະເທດຫຼືເຂົ້າສູ່ຕະຫຼາດພາຍໃນ. ການເຝິກອົບຮົມທີ່ຈັດຢູ່ໃນເສົາຄ້ຳທີ່ 3 ແມ່ນຈະມີຈຸດສຸມໃສ່ຂະແໜງການຜະລິດຕະພັນອຸດສາຫະກຳທີ່ຕິດພັນກັບຜະລິດຕະພັນແລະຈະແມ່ນການເຝິກອົບຮົມແບບທົ່ວໄປຂອງບັນດາຮູບບໍລິການSME ທີ່ລະບຸໄວ້ໃນເສົາຄ້ຳທີ 2.

ການຫັນເປັນອາຊີບໃນການໂຄສະນາການຕະຫຼາດຂອງຜະລິດຕະພັນດ້ວຍການເຝິກອົບຮົມສົມທົບກັບການເຮັດຕົວຈິງຈະເປັນກິດຈະກຳໜຶ່ງຂອງສູນບໍລິການສົ່ງເສີມການຕະຫຼາດໂດຍສະເພາະໃນການສົ່ງເສີມສິນຄ້າໂອດ໋ອບ(ODOP) ໃຫ້ແກ່ການທ່ອງທ່ຽວແລະຕະຫຼາດພາຍໃນແລະ ຕ່າງປະເທດພ້ອມທັງການຊ່ວຍເຫຼືອສ້າງຄວາມສາມາດໃຫ້ຜູ້ປະກອບການໄດ້ສະເໜີຜະລິດຕະພັນຂອງຕົນແບບມືອາຊີບໃນງານວາງສະແດງພາຍໃນກໍ່ຄື: ງານວາງສະແດງຜະລິດຕະພັນຍີ່ຫໍ້ລາວ(Made in Lao) ແລະງານວາງສະແດງອື່ນໆຢູ່ຕ່າງປະເທດແລະໃນລະບົບການຄ້າຜ່ານອິນເຕີເນັດ(e-commerce). ສຄອຊຈະເປັນຜູ້ຢັ້ງຢືນຜະລິດຕະພັນລາວໂດຍຜ່ານລະບົບBarcode.ເພື່ອບັນລຸເປົ້າໝາຍໃນການສະໜັບສະໜູນດ້ານການຕະຫຼາດສຄອຊໄດ້ກຳນົດຈຸດປະສົງດັ່ງຕໍ່ໄປນີ້:

- ຜະລິດຕະພັນລາວຖືກສົ່ງເສີມຢ່າງມືອາຊີບ;
- ເປັນມືອາຊີບໃນການເຂົ້າຮ່ວມແລະການຈັດຕັ້ງງານວາງສະແດງ;
- ການສົ່ງເສີມທຸລະກິດການຄ້າທາງອີເລັກໂທຣນິກແລະທຸລະກິດດິຈິຕອນ;
- ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະຕົວຊີ້ວັດຜະລິດຕະພັນ.

### 4.4 ການເຊື່ອມໂຍງເສດຖະກິດພາກພື້ນ ແລະການລົງທຶນທີ່ຍືນຍົງ.

ການເຊື່ອມໂຍງເສດຖະກິດພາກພື້ນໂດຍສະເພາະໃນກອບຂອງປະເທດອາຊຽນແລະປະເທດໃນລຸ່ມແມ່ນ້ຳຂອງ(GMS) ໄດ້ເປັນວຽກງານສຳຄັນຂອງສຄອຊ. ນອກຈາກນັ້ນຍັງມີວຽກງານການຮ່ວມມືເສດຖະກິດ-ທຸລະກິດໂດຍກົງກັບປະເທດອ້ອມຂ້າງເຊັ່ນ: ສປຈີນ, ລາຊະອານາຈັກໄທແລະສສຫວຽດນາມ. ກອບຂອງວຽກງານການເຊື່ອມໂຍງເສດຖະກິດນັ້ນແມ່ນການ

ປະຕິບັດຂໍ້ຕົກລົງຂອງປະເທດອາຊຽນໃນເຂດການຄ້າເສລີອາຊຽນ(AFTA) ແລະຂໍ້ຕົກລົງລະຫວ່າງປະເທດອາຊຽນກັບຄູ່ຮ່ວມເສດຖະກິດເຊັ່ນ: ສປຈີນ, ເກົາຫຼີໃຕ້ ແລະຍີ່ປຸ່ນ ໂດຍຜ່ານການເຂົ້າຮ່ວມກອງປະຊຸມຕ່າງໆຂອງຄະນະທີ່ປຶກສາທຸລະກິດອາຊຽນ (ASEAN-BAC) ແລະຂອງຄະນະທຸລະກິດລຸ່ມແມ່ນໍ້າຂອງ(GMS-Business Council).

ໃນໄລຍະຜ່ານການຄ້າສາຍແດນ(Border Trade) ໄດ້ເປັນວຽກງານທີ່ຕິດພັນກັບການຜະລິດທຸລະກິດແລະການຄ້າໃນປະເທດ. ການເຈລະຈາຂໍໂກຕ້າການຄ້າ ແລະຂົນສົ່ງຂອງລັດຖະບານແມ່ນບໍ່ສາມາດປະຕິບັດໄດ້ໂດຍສ່ວນຫຼາຍແລະຍັງເກີດມີສະພາບການເອົາປຽບເອົາລັດລະຫວ່າງທຸລະກິດຕ່າງປະເທດແລະທຸລະກິດພາຍໃນດ້ວຍກັນ. ສຄອຊຈຶ່ງເຫັນຄວາມສໍາຄັນໃນບັນດາສະພາການຄ້າ ແລະອຸດສາຫະກໍາແຂວງໄດ້ເຂົ້າຮ່ວມມີບົດບາດໃນການເຈລະຈາແລະຈັດຕັ້ງປະຕິບັດສັນຍາການຄ້າສາຍແດນພ້ອມທັງໄດ້ເກັບກໍາຂໍ້ມູນການນໍາເຂົ້າ-ສົ່ງອອກສິນຄ້າເພື່ອການລາຍງານ.

ການເຊື່ອມໂຍງເສດຖະກິດພາກພື້ນທີ່ຕິດພັນກັບການລົງທຶນຕ່າງປະເທດຢູ່ ສປປລາວ. ໂດຍສະເພາະການລົງທຶນຂອງພາກເອກະຊົນທີ່ຕ້ອງການເພື່ອເສີມການລົງທຶນຂອງພາກເອກະຊົນທີ່ຕ້ອງການເພື່ອເສີມການລົງທຶນຂອງລັດຖະບານໃຫ້ແໜ້ນຂຶ້ນ. ການສ້າງເສັ້ນທາງລົດໄຟແລະຖະໜົນທາງດ່ວນຈາກສາຍແດນສປຈີນເຖິງວຽງຈັນໂດຍລັດຖະບານມີຄວາມຕ້ອງການໃຫ້ພາກທຸລະກິດເອກະຊົນໃຫ້ລົງທຶນ.

ໃນການຜະລິດກະສິກໍາອຸດສາຫະກໍາແລະການບໍລິການເພີ່ມເຕີມເພື່ອເຮັດໃຫ້ເສດຖະກິດໄດ້ດີຂຶ້ນໄດ້ມີຜົນປະໂຫຍດໃຫ້ປະຊາຊົນລາວ. ສຄອຊຈະໄດ້ຈັດຕັ້ງຄະນະຮ່ວມມືທຸລະກິດກັບຕ່າງປະເທດໂດຍສະເພາະກັບອົງການຈັດຕັ້ງ ແລະທຸລະກິດຂອງສປຈີນເພື່ອພັດທະນາໂຄງການທີ່ມີຄຸນະພາບແລະຍືນຍົງໃນເຂດຕ່າງໆທີ່ກໍານົດໂດຍລັດຖະບານ.ເພື່ອສາມາດບັນລຸເປົ້າໝາຍທີ່ໄດ້ກ່າວມາຂ້າງເທິງນີ້ ສຄອຊໄດ້ມີຈຸດປະສົງ:

- ເຊື່ອມໂຍງທຸລະກິດໃນສປປລາວເຂົ້າໃນໂຄງປະກອບເສດຖະກິດຂອງASEAN, ASEAN+, GMS ແລະຂໍ້ຕົກລົງເສດຖະກິດຕ່າງໆໃນພາກພື້ນ.
- ສຄອຊມີບົດບາດຫຼາຍກວ່າເກົ່າໃນການເຈລະຈາການຄ້າ, ວາງແຜນການຜະລິດແລະຄຸ້ມຄອງການຄ້າສາຍແດນ.
- ສຄອຊໄດ້ສ້າງກົນໄກແລະຮູບແບບໃນການຮ່ວມມືທຸລະກິດກັບຕ່າງປະເທດເພື່ອສ້າງໂຄງການລົງທຶນທີ່ຍືນຍົງ.

### 4.5 ການພັດທະນາຜູ້ປະກອບການແລະກິດຈະການຜູ້ໃຊ້ແຮງງານ.

ສຄອຊເປັນອົງການຕາງໜ້າຜູ້ແຮງງານຂອງສປປລາວແລະມີພາລະໜ້າທີ່ໃນການວາງແຜນແລະຈັດຕັ້ງປະຕິບັດກິດຈະກໍາຂອງຜູ້ໃຊ້ແຮງງານຕາມລະບົບຄຸ້ມຄອງສາມຝ່າຍຮ່ວມກັບກະຊວງແຮງງານແລະສະຫວັດດີການສັງຄົມແລະອົງການກໍາມະບານລາວ.

ໃນປັດຈຸບັນບັນດາອຸດສາຫະກໍາທີ່ເປັນປາຍແຫຼມໃນການຂະຫຍາຍເສດຖະກິດເຊັ່ນ: ອຸດສາຫະກໍາປຸງແຕ່ງກະສິກໍາ, ອຸດສາຫະກໍາປຸງແຕ່ງເພື່ອສົ່ງອອກ, ອຸດສາຫະກໍາທ່ອງທ່ຽວແລະບັນດາທຸລະກິດການບໍລິການທີ່ປິ່ນອ້ອມເຊັ່ນ: ການຄ້າ, ການຂົນສົ່ງ, ການເງິນທະຄານແລະອື່ນໆ ແມ່ນຂາດຜູ້ປະກອບການທີ່ມີລະດັບການຄຸ້ມຄອງແລະແຮງງານທີ່ມີທັກສະທີ່ຕ້ອງການຈາກອຸດສາຫະກໍາ. ກິດຈະກໍາທີ່ສໍາຄັນອັນໜຶ່ງຂອງເສົາຄໍ້ານີ້ເປັນການສົ່ງເສີມການສຶກສາເຕັກນິກວິຊາຊີບ(TVET) ເພື່ອສ້າງກໍາລັງແຮງງານທີ່ມີຄຸນະພາບແລະຖືກກັບຄວາມຕ້ອງການກັບຕະຫຼາດແຮງງານເພື່ອສາມາດບັນລຸເປົ້າໝາຍດັ່ງກ່າວສຄອຊຈະໄດ້

ຮ່ວມໂຄງການພັດທະນາລະບົບການສຶກສາເຕັກນິກວິຊາຊີບແບບຄວບຄູ່ (ຮຽນຢູ່ໂຮງຮຽນແລະຢູ່ສະຖານທີ່ປະກອບການ, ໂຮງງານໄປພ້ອມໆກັນ), ໂຄງການຍົກລະດັບການສຶກສາຊັ້ນສູງຂັ້ນປະລິນຍາໂທດ້ານການຄຸ້ມຄອງໄລຍະສັ້ນ (MiniMBA) ໃຫ້ແກ່ຜູ້ປະກອບການ.ເພື່ອສາມາດບັນລຸເປົ້າໝາຍທີ່ກ່າວມານີ້ ສຄອຊໄດ້ວາງຈຸດປະສົງດັ່ງຕໍ່ໄປນີ້:

- ການຈັດຕັ້ງປະຕິບັດກົນໄກສາມຝ່າຍທີ່ປະກອບມີການຄົ້ນຄວ້ານິຕິກໍາ, ເງື່ອນໄຂແລະມາດຕະຖານວຽກງານຕາມອົງການແຮງງານໂລກ(ILO), ການກໍານົດເງິນເດືອນຕໍ່າສຸດແລະການຈັດງານຕະຫຼາດແຮງງານ.
- ການຈັດຕັ້ງປະຕິບັດວຽກງານການພັດທະນາອາຊີວະສຶກສາ.
- ການປັບປຸງການເຄື່ອນໄຫວຂອງຕະຫຼາດແຮງງານ.
- ການປັບປຸງຄວາມສາມາດໃນການຄຸ້ມຄອງຂອງຜູ້ປະກອບການ.

### 4.6 ຂໍ້ມູນຂ່າວສານ, ການປະສານສໍາພັນແລະການພັດທະນາສະມາຊິກຂອງສຄອຊ

ເສົາຄໍ້າທີ່ 6 ນີ້ແມ່ນມີເປົ້າໝາຍໃນການເສີມສ້າງຄວາມຮູ້, ຄວາມສາມາດແລະຄວາມເຂັ້ມແຂງໃຫ້ແກ່ສະມາຊິກຂອງສຄອຊລະດັບແຂວງແລະລະດັບສະມາຄົມທຸລະກິດ. ໃນປັດຈຸບັນການເຄື່ອນໄຫວຂອງສຄອແຂວງແລະສະມາຄົມທຸລະກິດຍັງຈໍາກັດແລະບໍ່ກົງກັບບັນດາເປົ້າໝາຍທີ່ລັດຖະບານແລະສຄອຊໄດ້ວາງໄວ້ ພ້ອມກັນນັ້ນການຂະຫຍາຍສະມາຊິກກໍ່ຍັງບໍ່ແຂງແຮງ.

ດໍາລັດເລກທີ່ 237/ນຍ ວ່າດ້ວຍບົດບາດແລະ ໜ້າທີ່ຂອງສຄອຊໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ສາຍພົວພັນລະຫວ່າງສຄອຊແລະສະມາຄົມທຸລະກິດຈຶ່ງມີຄວາມຈໍາເປັນໃຫ້ ສຄອຊໄດ້ປັບປຸງໂຄງຮ່າງການຈັດຕັ້ງ, ສາຍການຄຸ້ມຄອງແລະປະຕິບັດວຽກງານຂອງຕົນໃຫ້ແທດເໝາະຂຶ້ນຕື່ມ.

ເປົ້າໝາຍອີກຢ່າງໜຶ່ງຂອງເສົາຄໍ້າທີ 6 ແມ່ນການພັດທະນາລະບົບຂໍ້ມູນດ້ານທຸລະກິດແລະເສດຖະກິດຂອງສປປລາວທີ່ໃນປັດຈຸບັນແມ່ນເກືອບບໍ່ມີເລີຍແລະຢູ່ແບບກະແຈກກະຈາຍ (ບໍ່ລວມສູນ). ການລະບາດຂອງພະຍາດCOVID-19 ໄດ້ໃຫ້ສຄອຊເລັ່ງລັດການສ້າງລະບົບເກັບກໍາ, ເກັບຮັກສາແລະເຜີຍແຜ່ຂໍ້ມູນທຸລະກິດແລະເສດຖະກິດເພື່ອການຟື້ນຟູການຜະລິດກໍ່ຄືເສດຖະກິດຄືນໃໝ່ຢ່າງຮີບດ່ວນ.ເພື່ອສາມາດບັນລຸເປົ້າໝາຍດັ່ງກ່າວນີ້ ສຄອຊມີຈຸດປະສົງດັ່ງຕໍ່ໄປນີ້:

- ພັດທະນາລະບົບການຄຸ້ມຄອງໃນສຄອຊ, ສຄອແຂວງ, ນະຄອນຫຼວງແລະສະມາຄົມທຸລະກິດທີ່ກົມກຽວແລະມີປະສິດທິຜົນສູງ.
- ສ້າງຖານຂໍ້ມູນທຸລະກິດດີຊີຕໍທີ່ສາມາດຮັບໃຊ້ສະມາຊິກຂອງສຄອຊແລະພາກສ່ວນອື່ນໆ.
- ສ້າງລະບົບສັງລວມແລະເຜີຍແຜ່ຂໍ້ມູນທຸລະກິດ.
- ຄົ້ນຄວ້າວິໃຈຂໍ້ມູນທະລິດແລະສ້າງເປັນເອກະສານເຜີຍແຜ່ໃຫ້ລັດຖະບານແລະມວນຊົນ.